*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 04, 59-68*
*https://doi.org/10.69692/SUJMRD110459*

# Study the use of paragraph writing principles in Lao folk tales

**Khamphuy PHOLLUXA*[1], Phitsaphong VONHPHACHANH2, Outhay SEEBOUNHEUANG3, Chab VILAIVONE4, Souksada SOUTTHIXAY5**

*Department of Lao Language and Culture, Faculty of Letters, National University of Laos, Lao PDR*

***Correspondence:** Khamphuy PHOLLUXA, *Department of Lao Language and Culture, Faculty of Letters, National University of Laos.*
Tel:02028280269; E-mail: khamphuy.Plx@gmail.com

***Article Info:***
***Submitted: October 14, 2025***
***Revised: November 10, 2025***
***Accepted: November 17, 2025***

**Abstract**

This research focuses on the application of paragraph-writing principles in Lao folktales, with the objective of analyzing the narrative structure of the tale *Kampa Kaap Lang* according to these principles and identifying the key idea sentences in each paragraph.
The findings reveal that *Kampa Kaap Lang* is an extended narrative consisting of 87 paragraphs. The organization of the story, based on paragraph-writing principles, involves seven steps: (1) reading the entire story to understand its full content; (2) dividing the story into major sections; (3) breaking each section into smaller units based on events and character actions, thereby forming paragraphs; (4) combining narrative units according to the sequence of events and character actions to create coherent paragraphs; (5) removing unnecessary introductory or redundant words and converting poetic expressions into prose while retaining the characters' original poetic dialogue in quotation marks when necessary; (6) arranging the narrative into paragraphs based on the principle that each paragraph contains one main idea sentence; and (7) using Lao punctuation correctly within each paragraph.

Regarding the identification of key idea sentences in *Kampa Kaap Lang*, the study confirms the presence of 87 paragraphs, each containing one main idea sentence, resulting in a total of 87 key idea sentences. These sentences convey moral teachings essential to life, expressed through a tone of faithful, gentle, and tender love that reflects core Lao cultural values.

**Keywords**: Arrangement, Lao folk tale, writing paragraphs

## 1. ພາກສະເໜີ

ນິທານພື້ນເມືອງສະທ້ອນໃຫ້ເຫັນວິຖີຊີວິດ, ຮີດຄອງປະເພນີ ແລະ ວິທີຄິດຂອງກຸ່ມຄົນໃນແຕ່ລະສະໄໝ ສັງຄົມໄດ້ດີກວ່າປະຫັວດສາດ. ດ້ວຍເຫດນີ້ ນິທານພື້ນເມືອງລາວຍ່ອມເປັນສິ່ງຢັ້ງຢືນວ່າ ສັງຄົມລາວໄດ້ມີວິວັດທະນາການມາເປັນເວລາດົນນານແລ້ວດັ່ງ Sanghapanthanon (2011) ໄດ້ກ່າວໄວ້ວ່າ “ນິທານພື້ນເມືອງຂອງແຕ່ລະທ້ອງຖິ່ນ ເປັນຜະລິດຕະພັນຂອງສັງຄົມໃນອະດີດ ແລະ ໄດ້ຮັບການຖ່າຍທອດຕໍ່ມາຈາກຄົນຮຸ່ນໜຶ່ງສູ່ຄົນຮຸ່ນໜຶ່ງ. ສະນັ້ນ, ສັງຄົມໃດທີ່ອຸດົມດ້ວຍນິທານພື້ນເມືອງຍ່ອມເປັນເຄື່ອງຢືນຢັນວ່າ ສັງຄົມນັ້ນມີຄວາມເປັນມາຍາວນານ”. ການເລົ່ານິທານບໍ່ພຽງແຕ່ເພື່ອຄວາມບັນເທີງເທົ່ານັ້ນ ແຕ່ຍັງສະທ້ອນໃຫ້ເຫັນສະພາບສັງຄົມ, ວັດທະນະທຳ ແລະ ວິຖີຊີວິດຂອງຄົນໃນສັງຄົມທີ່ນິທານນັ້ນໆເກີດຂຶ້ນ ແລະ ຄົງຕົວອີກດ້ວຍ.

ຊົນຊາດລາວໄດ້ມີວິວັດທະນາການມາຢ່າງລະອຽດລະອຽວ ຈາກຍຸກຫີນກາງຕໍ່ໃສ່ຍຸກຫີນໃໝ່ ຈົນເຖິງຍຸກກ່ອນປະຫວັດສາດ, ຍຸກປະຫວັດສາດ ແລະ ມາເຖິງຍຸກປະຈຸບັນ Thepsimueang (2006) ໄດ້ກ່າວວ່າ, ຊົນເຜົ່າລາວມີວິວັດທະນາການມາເປັນເວລາດົນນານ ຈຶ່ງພາໃຫ້ຄົນລາວມີບົດນິທານອຸດົມສົມບູນ ແລະ ເປັນເອກະລັກຂອງຕົນ. ບົດນິທານພື້ນເມືອງລາວໄດ້ກໍ່ຮ່າງສ້າງຕົວຈາກປະສົບການຂອງການດຳລົງຊີວິດ, ພື້ນຖານເສດຖະກິດວັດທະນະທຳ ແລະ ສະພາບແວດລ້ອມທາງທຳມະຊາດຂອງແຜນດິນທີ່ຄົນລາວອາໄສຢູ່ເປັນເວລາຫຼາຍແສນປີ. ບົດນິທານພື້ນເມືອງລາວໄດ້ກາຍເປັນວັດທະນາທຳສ່ວນສຳຄັນ ທີ່ສະແດງເຖິງລະບົບຄິດ ຊຶ່ງເປັນປັດຊະຍາຊີວິດທີ່ໄດ້ຝັງເລິກ ຢູ່ໃນວິຖີຊີວິດຂອງຄົນລາວຢ່າງສະໜິດແໜ້ນ.

ໃນປະຫວັດສາດສັງຄົມລາວໄດ້ສະແດງໃຫ້ເຫັນວ່າ ສັງຄົມລາວໄດ້ຖືກສົງຄາມທຳລາຍຫຼາຍຫຼືບຫຼາຍຕ່າວ ແຕ່

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/)*

ບົດປະພັນວັນນະຄະດີພື້ນເມືອງ ເປັນຕົ້ນແມ່ນນິທານພື້ນ ເມືອງກໍຍັງກຳເນີດບົນພື້ນຖານການດຳລົງຊີວິດ ຂອງ ປະຊາຊົນລາວບັນດາເຜົ່າຕະຫຼອດມາ ຈົນເຖິງທຸກວັນນີ້. ສະແດງໃຫ້ເຫັນວ່າ ທຸກຍຸກທຸກສະໄໝ, ຄົນລາວເປັນຜູ້ມັກ ເລົ່ານິທານ ແລະ ຊົມໃຊ້ນິທານ. ການພິຈາລະນາ ຈາກການ ປົກປັກຮັກສາວັນນະຄະດີພື້ນເມືອງ ພົບວ່າ ການສືບທອດ ແລະ ສົ່ງທອດດ້ວຍປາກເປົ່າຈາກຮຸ່ນຄົນນີ້ຕໍ່ຮຸ່ນຄົນຕ່າງໆ ຂອງປະຊາຊົນຍັງຮັກສາໄດ້ດີສົມຄວນ. ແຕ່ວ່າປັດຈຸບັນນີ້, ປະຊາຊົນບໍ່ນິຍົມສົ່ງທອດບົດນິທານດ້ວຍປາກເປົ່າ ແລະ ອ່ານນິທານອີກ ເພາະອິດທິພົນຂອງສື່ຕ່າງໆ ທີ່ສາມາດນາ ເອົາບົດນິທານພື້ນເມືອງທີ່ມີເຄົ້າເລື່ອງ, ມີພື້ນຖານພາສາ ແລະ ວັດທະນະທຳ ອັນດຽວກັນເຂົ້າສູ່ຄວາມທັນສະໄໝ. ປະຊາຊົນລາວໂດຍສ່ວນໃຫຍ່ໄດ້ເບິ່ງນິທານເກົ່າທີ່ ພັດທະນາເປັນລະຄອນໂທລະທັດ ຈາກຊ່ອງໂທລະທັດ ແລະ ຢູທູບຈຶ່ງເຮັດໃຫ້ນິທານພື້ນເມືອງລາວ ນັບມື້ຫ່າງຫາຍ ຈາກວິຖີຊີວິດຂອງປະຊາຊົນ.

ເຖິງແມ່ນວ່າ, ພັກແລະລັດຖະບານລາວໄດ້ມີ ແນວທາງອັນຖືກຕ້ອງ ຊຶ່ງໄດ້ຍົກບົດບາດວັນນະຄະດີ ໂດຍ ສະເພາະນິທານພື້ນເມືອງທີ່ເປັນມໍລະດົກທາງວັດທະນະທຳ ທີ່ມີຄຸນຄ່າ ຊຶ່ງຄວນປົກປັກຮັກສາ ແລະພັດທະນາ; ແຕ່ໃນ ທາງປະຕິບັດ ກໍຍັງບໍ່ທັນມີແຜນການແຜນງານ ແລະ ມີ ຜົນສຳເລັດເທົ່າທີ່ຄວນ. ການຮຽນການສອນ ເຖິງແມ່ນວ່າ ໃນໂຄງການຫຼັກສູດການສຶກສາແຫ່ງຊາດໄດ້ນຳເອົາວິຊາ ວັນນະຄະດີ ເຂົ້າບັນຈຸໃນໂຄງການຫຼັກສູດການຮຽນການ ສອນທຸກຊັ້ນຮຽນ ແຕ່ຊັ້ນປະຖົມສຶກສາຮອດ ມະຫາວິທະຍາໄລກໍຕາມ ແຕ່ການຮຽນການສອນ ແລະ ການຄົ້ນຄວ້າບໍ່ທັນໄດ້ປັບປຸງ ແລະ ພັດທະນາໃຫ້ແທດເໝ າະກັບສະພາບການປ່ຽນແປງທາງສັງຄົມໃນຍຸກປັດຈຸບັນໄດ້ ເທື່ອເວົ້າລວມ, ເວົ້າສະເພາະແມ່ນການຮຽນການສອນ ນິທານພື້ນເມືອງ ໃນມະຫາວິທະຍາໄລ.

ຜ່ານການສັງເກດຂະບວນການຮຽນ-ການສອນ ວິຊາວັນນະຄະດີໂດຍສະເພາະແມ່ນວັນນະຄະດີພື້ນເມືອງ ແລະ ແຜ່ງພື້ນເມືອງ ຢູ່ພາກວິຊາພາສາ-ວັດທະນະທຳລາວ ພົບວ່າ ການສອນວັນນະຄະດີບໍ່ສາມາດສອນລົງເລິກໃນ ການຄົ້ນຄວ້າດ້ວຍການວິເຄາະວິຈານເນື້ອໃນທີ່ເປັນແກນ ແທ້ຂອງບົດນິທານພື້ນເມືອງ ແລະ ການນຳໃຊ້ນິທານ. ເພາະວ່າ ຂາດເອກະສາປະກອບການຮຽນ-ການສອນ ໂດຍ ສະເພາະແມ່ນບົດເລື່ອງ ແລະ ບົດວິເຄາະວິຈານບົດ ວັນນະຄະດີຕາມແນວຄິດທິດສະດີຕ່າງໆ. ບົດນິທານ ພື້ນເມືອງ ທີ່ພິມເຜີຍແຜ່ສ່ວນຫຼາຍແມ່ນຂຽນເປັນຄຳກອນ ແລະ ຂຽນດ້ວຍໜັງສືລາວບູຮານ ແລະ ການຂຽນບໍ່ເປັນ ລະບົບ ຊຶ່ງຍາກຕໍ່ກັບການອ່ານຂອງນັກສຶກສາປັດຈຸບັນ.

ການທົບທວນເອກະສານກ່ຽວຂ້ອງພົບວ່າໄດ້ມີນັກ ຄົ້ນຄວ້າຈຳນວນໜຶ່ງສົນໃຈສຶກສານິທານດັ່ງນີ້:

Phonkaseurmsouk (1989) ໄດ້ຮົມໂຮມ ນິທານຈາກການກວດສອບຈຳນວນ 24 ເລື່ອງ ມາພິມເປັນ ປຶ້ມອ່ານທົ່ວໄປ. ໃນນິທານ 24 ເລື່ອງ ເປັນນິທານປາກເປົ່າ ທີ່ໄດ້ມາຈາກປະຊາຊົນໃນທ້ອງຖິ່ນຕ່າງໆ ບາງເລື່ອງແມ່ນ ລູກຫຼານໄດ້ຟັງຈາກການເລົ່າຂອງປູ່ຍາຕາຍາຍຫຼືພໍ່ແມ່ ແລ້ວນຳມາຮຽບຮຽງ ບາງເລື່ອງກໍໄດ້ຈາກການຂຽນຂອງຜູ້ ເຖົ້າຜູ້ແກ່. ເຖິງແມ່ນວ່າ, ຄະນະຈັດພິມປຶ້ມເຫຼັ້ມນີ້ກໍໄດ້ມີ ການປັບປຸງຄືນ ແລະ ແກ້ໄຂພໍສົມຄວນ ແຕ່ກໍຍັງສັບສົນ ອ່ານແລ້ວຈັບໃຈຄວາມບໍ່ໄດ້.

ສະຖາບັນຄົ້ນຄວ້າວັດທະນະທຳ ກະຊວງຖະແຫຼງ ຂ່າວ ແລະ ວັດທະນະທຳ ໄດ້ຮອບຮອມນິທານຊົນເຜົ່າກະ ຕູ ຈຳນວນ 48 ເລື່ອງ ແລະ ຈັດແບ່ງອອກເປັນ 13 ໝວດ ຄື 1) ເລື່ອງກ່ຽວກັບໂລກ, 2) ກ່ຽວກັບຄົນແລະສັດ, 3) ກ່ຽວກັບຊີວິດຄອບຄົວ 4) ກ່ຽວກັບບຸກຄົນຜູ້ໜຶ່ງ, 5) ກ່ຽວກັບຄົນຕາຍ, 6) ກ່ຽວກັບຄົນຂີ້ຄ້ານ, 7) ກ່ຽວກັບຄົນ ກັບທຳມະຊາດ, 8) ກ່ຽວກັບຊີວິດ, 9) ກ່ຽວກັບສິ່ງດົນ ບັນດານ, 10) ກ່ຽວກັບສັດ, 11) ກ່ຽວກັບຄົນກັບເທວະດາ, 12) ກ່ຽວກັບຊີວິດ, 13) ກ່ຽວກັບຄົນບູຮານ. ການແບ່ງ ປະເພດມີລັກສະນະສັບສົນ ເພາະບໍ່ມີບ່ອນອີງໃນການຈັດ ແບ່ງ(Soudavhanh, 2005).

ໃນນິທານພື້ນເມືອງຂອງ Thepsymouang (2000) ໄດ້ເກັບກຳນິທານປາກເປົ່າຈາກປະຊາຊົນເຜົ່າລາວ ມາຮຽບຮຽງເປັນຄຳກອນຈຳນວນ 4 ເລື່ອງ ແລ້ວພິມ ເຜີຍແຜ່ເພື່ອເປັນການປົກປັກຮັກສາວັນນະຄະດີພື້ນເມືອງ ເອົາໄວ້.

Vilavong(1961) ໄດ້ລິດຈະນາເລື່ອງ ເວດສັນຕະ ລະຊາດົກດ້ວຍການນຳເອົາສອງສະບັບມາປະສົມກັນ ໂດຍ ເລືອກເອົາກັນໃດທີ່ຖືກຕ້ອງກວ່າ ມ່ວນກວ່າກໍເອົາຕາມ ສະບັບນັ້ນ. ສ່ວນຄຳປາລີກໍໄດ້ແກ້ໄຂ ໃຫ້ຖືກຕ້ອງຕາມຄຳ ພີເດີມອັນເປັນຄາຖາພັນ ແຕ່ການຂຽນເປັນອັກສອນລາວ ບໍ່ ຄົບຕາມອັກສອນປາລີ ຈຶ່ງຂຽນຕາມຕົວອັກສອນລາວທີ່ທີ່ ມີຢູ່.

ການຂຽນ ແລະ ຮຽບຮຽງເລື່ອງທ້າວຮຸ່ງທ້າວເຈືອງ ດ້ວຍການຖອດຄວາມອະທິບາຍໄວ້ວ່າ ພວກເຮົາໃຊ້ຄຳວ່າ ຖອດຄວາມອະທິບາຍແທນຄຳວ່າ ແປ ກໍເພາະວ່າ ການຮຽບຮຽງຄືນນັ້ນ ບໍ່ສາມາດແປສຳນວນຄວາມເວົ້າ ທຸກຄຳ ທີ່ພົບເຫັນໃນເລື່ອງນີ້ໄດ້ໝົດ. ອີກຢ່າງໜຶ່ງກໍຍ້ອນ

ວ່າໂວຫານຄຳກອນເລີກເຊິ່ງຈະແປຕາມຕົວໄປແຕ່ລະສັບບໍ່ໄດ້ ເພາະຕ້ອງອະທິບາຍຍືດຍາວ. ເພາະສະນັ້ນ, ການຖອດຄວາມຈຶ່ງເປັນການຕີຄວາມໝາຍ ແລະອະທິຍາຍລວມໆໄປຕາມບໍລິບົດ ໂດຍພະຍາຍາມໃຫ້ເນື້ອຄວາມຕໍ່ເນື່ອງກັນ. ອີກປະການໜຶ່ງ ກະວີມັກໃຊ້ຄຳຂະຫຍາຍກິລິຍາ ທັງມັກປຽບທຽບເລື່ອງຂອງຄົນ ໂດຍສະເພາະແມ່ນຄວາມຮູ້ສຶກອາລົມ, ຄວາມຮັກ ຫຼື ອາລົມທາງເພດ (Bounyavong et al. 2003).

Phollurxa et al. (2009)ໄດ້ນຳນິທານກຳພ້າເຜົ່າລາວ ຈາກການເລົ່າ 10 ເລື່ອງ, ການຈົດບັນທຶກ 12 ເລື່ອງ ແລະ ກຳພ້າພິມເຜີແຜ່ 10 ເລື່ອງ ລວມນິທານກຳພ້າ 32 ເລື່ອງມາຮຽບຮຽງຕາມວິທີການຂຽນຫຍໍ້ໜ້າ. ການສຶກສາພົບວ່າ ນິທານກຳພ້າ 32 ເລື່ອງມີຄວາມຍາວຂອງເນື້ອເລື່ອງບໍ່ເທົ່າກັນເຮັດໃຫ້ມີຈຳນວນຫຍໍ້ໜ້າບໍ່ເທົ່າກັນຄື ນິທານກຳພ້າປາກເປົ່າມີຈຳນວນຫຍໍ້ໜ້າແຕ່ 7 ຫາ 23 ຫຍໍ້າໜ້າ; ນິທານກຳພ້າຈົດບັນທຶກມີຈຳນວນຫຍໍ້ໜ້າແຕ່ 9 ຫາ 22 ຫຍໍ້າໜ້າ; ນິທານກຳພ້າພິມເຜີຍແຜ່ ມີຈຳນວນຫຍໍ້ໜ້າແຕ່ 14 ຫາ 87 ຫຍໍ້າໜ້າ.ນອກຈາກນີ້ ຍັງຄົ້ນຄວ້າດັ່ງກ່າວຍັງວິເຄາະວິທີຕັ້ງຊື່ນິທານກຳພ້າໄວ້ 3 ແບບ ຄື ຕັ້ງຊື່ຕາມຂອງວິເສດທີ່ຊ່ວຍຕົວລະຄອນກຳພ້າ, ຕັ້ງຊື່ຕາມທີ່ຢູ່ອາໄສຂອງຕົວລະຄອນກຳພ້າ ແລະ ຕັ້ງຊື່ຕາມຄຸນລັກສະນະຂອງຕົວລະຄອນກຳພ້າ.

Malaikham et al. (2025) ໄດ້ສຶກສາເນື້ອໃນນິທານ ແລະ ການປະຕິບັດຮີດຄອງປະເພນີຂອງຊາວພວນ. ການສຶກສາດ້ວຍການສຳພາດ ແລະ ບັນທຶກສຽງປະຊາຊົນເມືອງຄູນຊຽງຂວາງ; ສາມາດຮວບຮວມນິທານໄດ້ 40 ເລື່ອງ. ການວິເຄາະນິທານ 40 ເລື່ອງ ພົບ 5 ປະເພດຄືປະເພດນິທານຄຳສອນ, ການດຳລົງຊີວິດ, ການອະທິບາຍສະຖານທີ່ ທ້ອງຖິ່ນ ແລະ ນິທານຊວນຫົວ. ນິທານປະເພດດັ່ງກ່າວລ້ວນແຕ່ມີເນື້ອໃນສ່ອງແສງການດຳລົງຊີວິດຂອງປະຊາຊົນຊາວພວນ.

Duangphasy et al. (2024) ໄດ້ວິເຄາະເນື້ອໃນ ແລະ ປະເພດຂອງວັນນະຄະດີປາກເປົ່າຂອງໄຕແດງເມືອງເຟືອງແຂວງວຽງຈັນ ແລະ ນະຄອນວຽງຈັນ. ການສຶກສາພົບວ່າ ວັນນະຄະດີປາກເປົ່າຂອງໄຕແດງມີ 5 ປະເພດຄື ປະເພດນິທານ, ກາບກອນ, ກອນຂັບ, ຄຳກອມລູກ ແລະ ບົດປະກອບພິທີກຳຕ່າງໆ. ເນື້ອໃນວັນນະຄະດີປາກເປົ່າເວົ້າເຖິງຄວາມຮັກ, ຄວາມອິດສາບັງບຽດ ແລະ ຄວາເຊື່ອຖືຕ່າງໆ.

Charles (1985) ໄດ້ຮວບຮວມນິທານເຜົ່າມົ້ງທີ່ໄປຫຼີ້ໄພ ຢູ່ປະເທດອາເມລິກາ, ສາມາດຮວບຮວມນິທານໄດ້ 27 ເລື່ອງ, ມີຫຼາຍປະເພດເຊັ່ນ ປະເພດຕຳນານກ່ຽວກັບປະຫວັດຕ່າງໆ, ກ່ຽວກັບພຶດພຶດພັນທັນຍາຫານ, ເລື່ອງກ່ຽວກັບຄວາມເຊື່ອຖື ແລະ ປະເພນີຊີວິດຕ່າງໆ.

Lindell, 1977 ໄດ້ຮວບຮວມນິທານເຜົ່າກຳມຸຈຳນວນ 320 ເລື່ອງໄວ້ໃນປຶ້ມ (A KammuStory-Listenen's Tales); ການສຶກສາຍັງໄດ້ຈັດແບ່ງເລື່ອງອອກເປັນ 10 ກຸ່ມ ຄື ເລື່ອງກ່ຽວກັບນໍ້າຖ້ວມໂລກ, ກ່ຽວກັບວິລະບູລຸດ, ກ່ຽວກັບບຸກຄົນສະຫຼາດ, ກ່ຽວກັບຄວາມຮັກ, ກ່ຽວກັບຜີເຂົ້າຄົນ, ກ່ຽວກັບບອກທີ່ມາສິ່ງວັດຖຸປະກົດການຕ່າງໆ, ກ່ຽວກັບສິ່ງເລີກລັບມະຫັດສະຈັນ, ກ່ຽວກັບການດຳລົງຊີວິດ, ກ່ຽວກັບສັດ, ເລື່ອງກ່ຽວກັບຄວາມເຊື່ອ ແລະ ປະເພນີຊີວິດ.

NaThalang (2014) ໄດ້ສຶກສາໂຄງສ້າງ ແລະ ເນື້ອໃນຂອງນິທານ ກ່ຽວກັບການສ້າງໂລກ, ສ້າງມະນຸດ ແລະ ພິຈາລະນາຄວາມສຳພັນທາງວັດທະນະທຳຂອງຄົນໄທແຕ່ລະກຸ່ມ. ການສຶກສາໄດ້ພົບໂຄງສ້າງຂອງຕຳນານການສ້າງໂລກ 3 ແບບ ຄື ປູ່ສັງກະສາຍ່າສັງກະສີເປັນຜູ້ສ້າງໂລກ , ເທວະດາເປັນຜູ້ສ້າງໂລກ ແລະ ຜີແຖນເປັນຜູ້ສ້າງໂລກ. ການສຶກສາຍັງໄດ້ຊີ້ໃຫ້ເຫັນວ່າ ຕຳນານການສ້າງໂລກໄດ້ສະທ້ອນລະບົບຄິດ ແລະ ວັດທະນະທຳຂອງຄົນໄທມີຄວາມສຳພັນກັບກຸ່ມຄົນໄທໃນດິແດນຕອນກາງລຸ່ມແມ່ນໍ້າຂອງ ໄດ້ມີຄວາມສຳພັນກັນຢ່າງໃກ້ສິດ.

Kobbun (2001)ໄດ້ສຶກສານິທານກຳພ້າຂອງໄທ-ລາວໃນພາກເໜືອຂອງໄທ, ລາວ, ກຳພູຊາ ແລະ ຫວຽດນາມ. ນິທານກຳພ້າທີ່ນຳມາວິເຄາະຕາມທິດສະດີໂຄງສ້າງ ພົບ ໂຄງສ້າງຫຼາຍແບບເຊັ່ນ ໂຄງສ້າງແບບນິທານກຳພ້າທົ່ວໄປ, ແບບນິທານກຳພ້າຜີນ້ອຍ, ແບບເລື່ອງຂີ້ທູດສາມເປົາ, ແບບເລື່ອງກຳພ້າໄກ່ແກ້ວ. ການສຶກສາດັ່ງກ່າວນີ້ຍັງສະແດງໃຫ້ເຫັນເຖິງພຶດຕິກຳຕ່າງໆຂອງຕົວລະຄອນໃນນິທານກຳພ້າ.

Phetcharat (2000) ໄດ້ວິເຄາະນິທານໄທຍວນຕຳບົນຫາດສ້ຽວ. ການສຶກສາພາໃຫ້ມອງເຫັນພາບທີ່ເປັນລັກສະນະສາກົນ ຄື ຄວາມຕ້ອງການຂອງຄົນໃນສັງຄົມ ຊຶ່ງສະແດງອອກໃນດ້ານແບບຢ່າງປະພຶດຕິກຳຂອງຄົນໃນສັງຄົມແມ່ນຕ້ອງມີການປະພຶດດີ, ມີຄວາມຊື່ສັດ ແລະ ຄວາມສະຫຼຽວສະຫຼາດ. ນອກຈາກນີ້ ນິທານຍັງສະແດງໃຫ້ເຫັນຄ່ານິຍົມທີ່ແຕກຕ່າງ ຈາກຄວາມເປັນຈິງຂອງສັງຄົມ ຄື ນິຍົມຍົກຍ້ອງເມຍນ້ອຍໃຫ້ເປັນຄົນດີເພື່ອເປັນຄະຕິເຕືອນໃຈໃຫ້ແກ່ເມຍຫຼວງຕ້ອງປະພຶດຕົນເປັນຄົນດີ, ສາມີຈຶ່ງບໍ່ມີເມຍນ້ອຍ. ນິທານເປັນເຄື່ອງມືໃນການຖ່າຍທອດແນວທາງໃນການດຳເນີນຊີວິດຂອງຄົນຮູ່ນນີ້ໃຫ້

ຄົນຮຸ່ນຕໍ່ໄປ ແລະ ເປັນເຄື່ອງຜ່ອນຄາຍຄວາມຕຶງຄຽດ; ໃຫ້ຄວາມເພີດເພີນແກ່ຄົນໃນສັງຄົມອີກດ້ວຍ.

Vongthes (2005) ໄດ້ສຶກສາບົດບາດຂອງນິທານຊາດົກ ໃນທາງຄວາມສຳພັນກັບສັງຄົມ. ການຄົ້ນຄວ້າໄດ້ຮວບຮວມນິທານ ແລະ ຕຳນານຈາກກຸ່ມເຊື້ອຊາດໄທ-ລາວ ມາວິເຄາະຕາມແນວຄິດທິດສະດີບົດບາດໜ້າທີ່ຂອງນິທານ. ການສຶກສາພົບວ່າ ນິທານເຫຼົ່ານັ້ນໄດ້ມີບົດບາດຕໍ່ການສ້າງເອກະລັກຂອງຊາວພວນ ເພາະວ່ານິທານດຳລົງຢູ່ ດ້ວຍຄວາມສຳພັນກັບວິຖີຊີວິດຂອງຊາວລາວພວນທັງດ້ານປະເພນີພິທີກຳ, ການຕັ້ງຖິ່ນຖານ ແລະ ຄວາມເຊື່ອຕ່າງໆ.

ຈາກບັນຫາຄົ້ນຄວ້າ ແລະ ການທົບທວນເອກະສານກ່ຽວຂ້ອງພົບວ່າ ນັກຄົ້ນຄວ້າໄດ້ຮວບຮວມນິທານພື້ນເມືອງມາຮຽບຮຽງເປັນຄຳກອນ ແລະ ເປັນຄຳເວົ້າທຳມະດາ ແຕ່ການຈັດເນື້ອເລື່ອງບໍ່ເປັນລະບົບ ແລະ ເປັນພາສາລາວບູຮານ. ບັນຫາດັ່ງກ່າວໄດ້ກາຍເປັນສາເຫດສຳຄັນໜຶ່ງທີ່ເຮັດໃຫ້ນັກສຶກສາບໍ່ມັກຮຽນວິຊາວັນນະຄະດີ ແລະ ບໍ່ມັກອ່ານບົດວັນນະຄະດີ. ນັກສຶກສາທີ່ຮຽນຈົບອອກໄປກໍບໍ່ສາມາດຄົ້ນຄວ້າ, ວິເຄາະວິຈານບົດນິທານ ແລະ ນຳເອົາບົດນິທານເກົ່າມາປະຍຸກໃຊ້ບໍ່ໄດ້.

ເພື່ອເປັນອຸທາຫອນໃຫ້ແກ່ການຈັດຮຽງນິທານພື້ນເມືອງລາວ ຕາມແນວຄິດທິດສະດີພາສາສາດ ເຮັດໃຫ້ເນື້ອເລື່ອງອ່ານງ່າຍ, ເຂົ້າໃຈໄວ ແລ້ວສາມາດສະຫຼຸບປະໂຫຍກໃຈຄວາມສຳຄັນຕາມຫຍໍ້ໜ້າ ແລະ ສະດວກໃນການວິເຄາະວິຈານບົດວັນນະຄະດີໃນຂັ້ນຕໍ່ໄປ. ສະນັ້ນ, ທີມງານຄົ້ນຄວ້າຈຶ່ງສົນໃຈສຶກສາວິທີການ ຈັດຮຽງນິທານພື້ນເມືອງຈາກຄຳຮ້ອຍກອງມາເປັນຄຳຮ້ອຍແກ້ວ ຕາມຫຼັກການການຂຽນຫຍໍ້ໜ້າ. ບັນຫາທີ່ສົນໃຈໄດ້ກາຍເປັນຄຳຖາມຄົ້ນຄວ້າ ເພື່ອຫາຄຳຕອບຄື ການຈັດຮຽງນິທານກຳພ້າກາບລາງຈາກຄຳຮ້ອຍກອງເປັນຄຳຮ້ອຍແກ້ວ ຕາມຫຼັກການຂຽນຫຍໍ້ໜ້າ ມີວິທີຈັດຮຽງແນວໃດ ແລະ ສາມາດຈັດຮຽງໄດ້ຈັກຫຍໍ້ໜ້າ?

## 2. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ແມ່ນການສຶກສາທາງຄຸນນະພາບ ໂດຍວິເຄາະນິທານພື້ນເມືອງລາວ ຜ່ານເອກະສານ. ການສຶກສາໄດ້ມີເກນໃນການຄັດເລືອກນິທານຄື 1) ຕ້ອງເປັນນິທານທີ່ໄດ້ພິມເຜີຍແຜ່ເປັນຄຳຮ້ອຍກອງ 2) ນິທານຕ້ອງເປັນເລື່ອງທີ່ມີຄວາມອຸດົມສົມບູນທາງດ້ານເນື້ອໃນມີທັງສາດ ແລະ ສິນ, ສາມາດເປັນຕົວແທນໄດ້. 3) ບົດເລື່ອງຕ້ອງເປັນນິທານອັດສະຈັນດີເດັ່ນ, ມີພາສາເໝາະມ່ວນ ແລະ 4) ນິທານຕ້ອງເປັນເລື່ອງພື້ນເມືອງລາວທີ່ມີເນື້ອເລື່ອງແຕ່ຕົ້ນຈົນຈົບ.

### 2.1 ກຸ່ມເປົ້າໝາຍຂອງການຄົ້ນຄວ້າ

ກຸ່ມເປົ້າໝາຍການຄົ້ນຄວ້າແມ່ນຄຳກອນເລື່ອງກຳພ້າກາບລາງ ຊຶ່ງປະກອບດ້ວຍ ບາດ 868ກອນ,ອັກ 3472 ແລະ ປະກອບມີເຫດການການເຄື່ອນໄຫວຂອງຕົວລະຄອນໃນເລື່ອງ ທີ່ຈະນຳມາຈັດຮຽງເນື້ອເລື່ອງຕາມປະໂຫຍກໃຈຄວາມຫບໍ້ໜ້າ ຈຳນວນ 87 ເຫດການ.

### 2.2 ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

ເນື່ອງຈາກການສຶກສາຄັ້ງນີ້ແມ່ນການສຶກສາທາງຄຸນນະພາບ ເກັບຂໍ້ມູນຈາກເອກະສານເລື່ອງກຳພ້າກາບລາງ, ສະບັບ ຄຳຮ້ອຍກອງ. ດັ່ງນັ້ນ, ເຄື່ອງມືການຮວບຮວມປະຊາກອນຈຶ່ງເປັນຄຳຖາມປາຍເປີດ ເພື່ອຊ່ວຍວິເຄາະບາດກອນໃນເນື້ອເລື່ອງ ແລະ ເກັບປະຊາກອນຊຶ່ງເປັນເຫດການການເຄື່ອນໄຫວຂອງຕົວລະຄອນໃນນິທານກຳພ້າກາບລາງ.

### 2.3 ວິທີການເກັບຂໍ້ມູນ

ເພື່ອຮວບຮວມເຫດການການເຄື່ອນໄຫວຂອງຕົວລະຄອນຕ່າງໆໃນນິທານມາຈັດຮຽງດ້ວຍການຂຽນຫຍໍ້ໜ້າ ຈຶ່ງໄດ້ວາງເກນການສຶກສາໄວ້ 7 ຂັ້ນຕອນຄື 1) ອ່ານກອນເລື່ອງກຳພ້າກາບລາງ ຈຳນວນ 868 ບາດໃຫ້ລະອຽດ 2) ແບ່ງເນື້ອເລື່ອງອອກເປັນຕອນ, 3) ແບ່ງຕອນຕາມເຫດການການເຄື່ອນໄຫວຂອງຕົວລະຄອນ, 4) ລວມບາດກອນຕາມເຫດການໜຶ່ງເປັນໜຶ່ງຫຍໍ້ໜ້າ, 5) ຂຽນປະໂຫຍກໃຈຄວາມສຳຄັນ ຂອງຫຍໍ້ໜ້າໃນທຸກຫຍໍ້ໜ້າ.

ການຈັດຮຽງເນື້ອເລື່ອງກຳພ້າກາບລາງເປັນຄຳຮ້ອຍແກ້ວໄດ້ປະຕິບັດ 4) ຂັ້ນຕອນຄື (1 ນຳເອົາບາດກອນຕາມເຫດການການເຄື່ອນໄຫວຕົວລະຄອນມາ ຕັດຄຳບຸບພະບົດ ແລະ ຄຳສ້ອຍທີ່ບໍ່ເປັນຈຳເປັນອອກ (2 ປັບປຸງສຳນວນກອນເປັນຄຳເວົ້າທຳມະດາ 3) ຂຽນຫຍໍ້ໜ້າດ້ວຍປະໂຫຍກໃຈຄວາມສຳຄັນ ແລະ ປະໂຫຍກຂະຫຍາຍໃຈຄວາມສຳຄັນຂອງຫຍໍ້ໜ້າ ແລະ 4 (ໃສ່ເຄື່ອງໝາຍວັກຕອນ 17 ເຄື່ອງລົງຫຍໍ້ໜ້າເຊັ່ນ ໝາຍ ຈ້ຳ (.), ຈ້ຳຈຸດ (;), ສອງ (:) ແລະ ເຄື່ອງໝາຍອື່ນ 17 ເຄື່ອງໝາຍ (Nuannavong et al.(2020 .

### 2.4 ການວິເຄາະຂໍ້ມູນ

ການວິເຄາະນິທານພື້ນເມືອງ ເລື່ອງກຳພ້າກາບລາງ ໄດ້ອີງໃສ່ຫຼັກການຂຽນຫຍໍ້ໜ້າຂອງ Sangkhwanyuen, ((1982 ເປັນແນວທາງຄື ນຳເຫດການໃນເລື່ອງກຳພ້າກາບລາງມາສ້າງເປັນປະໂຫຍກໃຈຄວາມ ຈາກນັ້ນນຳປະໂຫຍກໃຈຄວາມວາງໄວ້ໃນຕຳແໜ່ງຕ່າງໆຂອງຫຍໍ້ໜ້າ ຕຳແໜ່ງຄື ຫຍໍ້ໜ້າມີປະໂຫຍກ 5

ໃຈຄວາມສໍາຄັນໄວ້ຕອນຕົ້ນ; ໄວ້ຕອນກາງ; ໄວ້ຕອນຕົ້ນ ແລະ ຕອນທ້າຍ; ໄວ້ຕອນທ້າຍ ແລະ ຫຍໍ້ໜ້າບໍ່ມີປະໂຫຍກໃຈຄວາມສໍາຄັນ. ນອກຈາກນີ້ ການຈັດຮຽງເນື້ອເລື່ອງຍັງໃສ່ສັນຍະລັກອີງເລັບ; ໃນອີງເລັບມີຕົວເລກ 2 ຄືວຄື ຕົວເລກທີ່ 1 ແມ່ນລະຫັດປະໂຫຍກໃຈຄວາມຂອງຫຍໍ້ໜ້າ, ຕົວເລກທີ 2 ແມ່ນເລກໜ້າເອກະສານ. ຕົວຢ່າງ: (1 : 2), 1 ແມ່ນລະຫັດປະໂຫຍກໃຈຄວາມຂອງຫຍໍ້ໜ້າໃນເລື່ອງກໍາພ້າກາບລາງ 2 ແມ່ນເລກໜ້າເອກະສານນິທານກໍາພ້າກາບລາງ ສະບັບຄໍາຮ້ອຍກອງ (chanthachaks and sanchomphou, 2015).

### 3. ຜົນໄດ້ຮັບ

ຜົນການສຶກສາການນໍາໃຊ້ຫຼັກການຂຽນຫຍໍ້ໜ້າໃນນິທານພື້ນເມືອງລາວແມ່ນການວິເຄາະວິທີການຈັດຮຽງເນື້ອເລື່ອງນິທານກໍາພ້າກາບລາງຈາກຄໍາຮ້ອຍກອງເປັນຄໍາຮ້ອຍແກ້ວຕາມຫຼັກການຂຽນຫຍໍ້ໜ້າ ແລະ ຖອດປະໂຫຍກໃຈຄວາມສໍາຄັນຂອງຫຍໍ້ໜ້າດັ່ງນີ້:

#### 3.1 ການຈັດຮຽງເນື້ອເລື່ອງ ນິທານກໍາພ້າກາບລາງ ຕາມຫຼັກການຂຽນຫຍໍ້ໜ້າ

ຜົນການຄົ້ນຄວ້າພົບວ່າ ນິທານກໍາພ້າກາບລາງມີເນື້ອເລື່ອງຍາວມີ ບາດ 868ກອນ ສາມາດຈັດຮຽງເປັນຫຍໍ້ໜ້າໄດ້ຈໍານວນ87 ຫຍໍ້ໜ້າ. ໃນບົດຄວາມນີ້ ບໍ່ສາມາດນໍາສະເໜີທຸກຫຍໍ້ໜ້າໄດ້ ຈຶ່ງໄດ້ຍົກເອົາມາເປັນຕົວຢ່າງ 2 ຫຍໍ້ໜ້າດັ່ງນີ້:

<u>ແຕ່ປາງກ່ອນຍັງມີທ້າວເສດຖີຜູ້ໜຶ່ງມີຊາດຕະກຸນດີ ແຕ່ພໍ່ແມ່ຕາຍເສຍ ແຕ່ເວລາຍັງນ້ອຍ.</u> ທ້າວເສດຖີກໍາພ້າຄົນນີ້ມີເງິນຄໍາຢູ່ໃນສາງຫຼາຍເຖິງ 18 ໂກດ, ມີຕາສີຕາສາຄອຍຮັບໃຊ້ມີງົວຄວາມຊ້າງມ້າຄົບໝົດທຸກຢ່າງ ,.ທ້າວໃຊ້ຊີວິດຢ່າງມີຄວາມສຸກ ແຕ່ຫາຜູ້ທີ່ຈະມາເປັນຄູ່ຊີວິດຊໍ້າພັດບໍ່ມີ. ແຕ່ລະມື້ພໍຕົກແລງມາເສດຖີກໍາພ້າກໍມີແຕ່ຫາທ່ຽວໄປຫຼິ້ນສາວຢູ່ທີ່ໂຮງຫຼວງຂອງເມືອງຈໍາປານະຄອນຢູ່ຕະຫຼອດ (1: 2).

ຢູ່ເມືອງຈໍາປາຍັງມີຍິງຄົນໜຶ່ງຊື່ວ່າ ນາງບົວທອງ ເປັນຍິງມີຮູບຮ່າງຜິວພັນສວຍງາມ; ນາງເປັນລູກສາວຄົນດຽວຂອງພະຍາເມືອງຈໍາປາ. ມື້ໜຶ່ງ, ນາງບົວທອງມີຄວາມເມື່ອຍອຸກອັ່ງຢູ່ໃນຈິດໃຈກໍເລີຍເອີ້ນບອກພວກສາວຮັບໃຊ້ໄປດັງໄຟ ເພື່ອຈະໄດ້ລົງໄປຫຼິ້ນເຂັນຝ້າຍ, ຢອກໄຍກັນກັບໝູ່ເພື່ອນ ໃຫ້ມ່ວນຊື່ນ. ໃນເວລາທີ່ນາງບົວທອງ ແລະ ຄົນຮັບໃຊ້ແກວ່ງຫຼາເຂັນຝ້າຍ ຢ່າງມ່ວນຊື່ນຢູ່ນັ້ນ, ທ້າວເສດຖີກໍາພ້າເຫັນນາງບົວທອງ ມີຮູບຮ່າງຜິວພັນງົດງາມ ເປັນທີ່ຖືກອົກຖືກໃຈ. <u>ເສດຖີກໍາພ້າເກີດມີໃຈຮັກນາງບົວທອງ ຈຶ່ງຍ່າງເຂົ້າໄປຫາ ແລະບອກວ່າ ຢາກໄດ້ນາງມາຮ່ວມຮຽງຄຽງຊ້ອນ.</u> ເມື່ອນາງບົວທອງໄດ້ຍິນເສດຖີເວົ້າແນວນັ້ນ ກໍຍິ້ມ ແລະ ກ່າວຕອບໄປວ່າ ຂໍໃຫ້ບາບ່າວທ້າວກຸນາທານໂຜດ! ນ້ອງນີ້ປຽບເປັນດັ່ງນໍ້າເດືອນຫ້າຂາດເຂີນ; ຝົນບໍ່ລົງຮໍາໃຫ້ບໍ່ມີແປວນໍ້າໃຫຍ່; ຄັນວ່າ ປາບໍ່ບ້ອນຊິສູນເສົ້າໝົ່ນໝອງ! ຂໍໃຫ້ບາບ່າວທ້າວມາສິງໂສດໃຫ້ຫາຍຮ້ອນຊື່ນບານແດ່ທ້ອນ! ທ້າວເສດຖີເວົ້າຕອບໄປວ່າ ນາງຜູ້ງາມເອີຍ ຈັ່ງແມ່ນຊ່າງເວົ້າຊ່າງຈາ ແທ້ນໍນາງເອີຍ! ( 2: 3 ).

#### 3.2ການຖອດປະໂຫຍກໃຈຄວາມສໍາຄັນຂອງຫຍໍ້ໜ້າໃນນິທານກໍາພ້າກາບລາງ

ໃນນິທານກໍາພ້າກາບລາງ ປະກອບມີ87 ຫຍໍ້ໜ້າ ແຕ່ລະຫຍໍ້ໜ້າມີປະໂຫຍກໃຈຄວາມ ປະໂຫ 1ຍກ ສາມາດຖອດປະໂຫຍກໃຈຄວາມຂອງນິທານກໍາພ້າກາບລາງໄດ້ 87ປະໂຫຍກ ລາຍລະອຽດມີດັ່ງນີ້:

1. ເສດຖີກໍາພ້າຜູ້ໜຶ່ງມີຊາດຕະກຸນດີ ແຕ່ພໍ່ແມ່ຕາຍເສຍແຕ່ເວລາຍັງນ້ອຍ(1:2)
2. ເສດຖີກໍາພ້າມີໃຈຮັກນາງບົວທອງ ຈຶ່ງບອກນາງວ່າ ຢາກໄດ້ນາງມາຮ່ວມຮຽງຄຽງຊ້ອນ (2 : 2)
3. ເສດຖີກໍາພ້າຊວນສ່ຽວກໍາພ້າ ໄປຫຼິ້ນນໍາ ແຕ່ກໍາພ້າບໍ່ໄປ (4:3)
4. ມື້ໜຶ່ງ, ກໍາພ້າຄິດຢາກເຮັດສີຊໍ ຈຶ່ງໄດ້ເຂົ້າໄປໃນປ່າຫາໄມ້ເຮັດສີຊໍ ຈົນຄໍ່າມືດຈຶ່ງໄດ້ຊໍສຽງມ່ວນ (4:4)
5. ສອງສ່ຽວໄດ້ໄປຫຼິ້ນໂຮງຈໍາປານະຄອນ, ກໍາພ້າໄດ້ສີຊໍໄປນໍາ; ໃຜໄດ້ຍິນສຽງກໍຂົນລຸກ ເພາະມ່ວນຫຼາຍ (5:5)
6. ກໍາພ້າໄດ້ພົບກັບນາງບົວທອງ ກໍຮູ້ສຶກຖືກຕາເໝືອນໄດ້ເປັນຊູ້ຮ່ວມຮັກກັນມາແຕ່ດົນແລ້ວ (7:6)
7. ບົວທອງບອກຄວາມໃນໃຈໃຫ້ທຸກຂະຕະຟັງວ່າ "ນ້ອງນີ້ໝາຍປອງອ້າຍເປັນຄູ່ຊ້ອນ ຈະໄປຂໍເພິ່ນໃຫ້ ເຮົາໄດ້ສົມຫວັງ(7:10)
8 . ທັງສອງກໍາລັງສາລະພາບຮັກ, ສ່ຽວເສດຖີໄດ້ເຂົ້າມາຂັດຂວາງ ແຕ່ຖືກນາງບົວທອງໄລ່ໜີ(12:8)
9 . ຍ່າເອົາເຄື່ອງນຸ່ງທຸກຂະຕະໄປສົ່ງນາງບົວທອງ ຈຶ່ງເຂົ້າໃຈແຈ້ງວ່າ ນາງບົວທອງມີໃຈຮັກຫຼານຊາຍຂອງຕົນ (13:9)
10. ກໍາພ້າເສດຖີ ຄິດວ່າ ທຸກຂະຕະຍາດຄົນຮັກຂອງຕົນຈຶ່ງວາງແຜນຂ້າ (14 :10)
11. ກໍາພ້າໄດ້ຄອບລາບົວທອງໄປຄ້າເປັນເວລາສາມປີ ສາມເດືອນ ກັບສາມມື້ຈຶ່ງຈະກັບ (15 :11)
12. ສອງສ່ຽວເດີນທາງຜ່ານປ່າໄມ້ນີ້ຕໍ່ມື້ໜ້າ ຈົນເປັນເວລາຫ້າເດືອນ ກໍບໍ່ປາກົດເຫັນບ້ານເມືອງຈັກແຫ່ງ (18 :12)

13. ສອງສ່ຽວໄດ້ເດີນທາງໄປພັກຢູ່ເຂດພູສູງບໍ່ມີນໍ້າ, ທຸກ ຂະຕະໄປຊອກຫານໍ້າກິນນໍ້າອາບ ສ່ວນເສດຖີກໍາພ້າໄດ້ໜີ ເມືອບອກຍ່າວ່າ ທ້າວທຸກຂະຕະຕາຍແລ້ວ (20 :13)
14. ຍ່າ ແລະ ນາງບົວທອງຮູ້ຂ່າວວ່າ ທຸກຂະຕະຕາຍ, ກໍ ພາກັນເສຍໃຈ ຮ້ອງໄຫ້ 2ກ,(22:14)
15. ບົວທອງຄິດຮອດທ້າວທຸກຂະຕະຕາຍຫຼາຍ ຈຶ່ງ ກະກຽມເຮັດບູນກະຖິນ ເພື່ອອຸທິດໄປໃຫ້ທຸກຂະຕະ (23:15)
16. ບົວທອງ ພ້ອມຍາດພີ່ນ້ອງພາກັນຖວາຍເຄື່ອງກະຖິນ ມີທັງສີຊໍ ແລະ ເຄື່ອງສັງຄະທານ, ເຂົ້ານໍ້າຊໍາປາທຸກປະການ ອຸທິດໃຫ້ແກ່ທຸກຂະຕະ(24:16)
17. ທຸກຂະຕະໄປຊອກຫານໍ້າ ຢູ່ໃນປ່າດົງອັນໃຫຍ່ກວ້າງ ; ລາວອິດເມື່ອຍ ຈຶ່ງຕົກຜາ ແລ້ວຕາຍ( 26:17)
18. ພະອິນໄດ້ເອົານໍ້າເຕົ້າແກ້ວມາຫົດເອົາທ້າວທຸກຂະຕະ ; ລາວສະດຸ້ງຕື່ນຂຶ້ນມາ (27:18)
19. ທຸກຂະຕະຮູ້ເມື່ອຄືງໄດ້ເຫັນຜູ້ຍິ່ງຜູ້ໜຶ່ງ ຈຶ່ງຍົກມືໄຫວ້ ຂໍໃຫ້ຊ່ວຍບອກທາງແດ່.(29 :19)!
20. ເທວະດາແຫ່ງປ່າໃຫຍ່ຄູຫາໄດ້ພາກໍາພ້າໄປພັກຢູ່ຖໍ້າ; ໄດ້ອາບນໍ້າອ່າງຄໍາ,ໄດ້ກິນອາຫານທິບ, ໄດ້ນອນເສື່ອຄໍາ ແລະໄດ້ຫົ່ມຜ້າສວຍງາມ ) .(30 :20
21. ກໍາພ້າພັກຢູ່ຖໍ້າຄູຫາ ແລ້ວຍ່າງຊົມສ່ວນອຸທິຍານລາວ ; ໄດ້ເຫັນດອກໄມ້, ໝາກໄມ້ຫຼາຍຊະນິດ ແລະ ຕົ້ນໄມ້ສວຍ ງາມເໝືອນເນລະມິດ .(21:32) !
22. ເຊົ້າມື້ທີສາມ, ແມ່ລະນີເອີ້ນກໍາພ້າໄປກິນເຂົ້າເຊົ້າຮ່ວມ ກັນ ແລ້ວສັ່ງລາ ແລະ ມອບຂອງວິເສດໃຫ້ກໍາພ້າ ແລ້ວເພິ່ນ ກໍຕາຍກາຍເປັນແທ່ງຄໍາ ແລະ ວິນຍານກໍໄປເປັນເທວະດາຢູ່ ເທິງຟ້າ .(22:34) !
23. ກໍາພ້າທຸກຂະຕະຫຼັງຈາກມ້ຽນມັດ ແລະ ສົມມາສືບ ແມ່ທໍລະນີແລ້ວ ລາວກໍໃສ່ເກີບແກ້ວເຫາະເຫີນໄປຮອດ ເມືອງຕັກກະເສລາ ເຊິ່ງເປັນເມືອງຄ້າຂາຍທີ່ມີຊື່ສຽງ) :23 .(36
24. ເມືອງ ຄ້າຕັກກະເສລາມີເຄື່ອງຄ້າຂາຍຫຼາຍອັນພັນ ແນວຈັ່ງແມ່ນບຸນຂອງກໍາພ້າທີ່ໄດ້ມາຕົກຢູ່ແດນຄ້າ ແລະ ມີ ແຕ່ຄົນຮັກຄົນແພງ .(38 :24) !
25. ກໍາພ້າເຫັນນາຍພານເອົາໂຕກາມາຂາຍ, ລາວໄດ້ເອົາ ເງິນຮ້ອຍຊັ່ງ ໄຖ່ເອົາກາໄປນໍາ.(25:40)
26.ກໍາພ້າໄດ້ເຫັນນາຍພານນໍານາກໃຫຍ່ມາຂາຍ, ລາວໄດ້ ຈົກເອົາຄໍາໄຖ່ເອົານາກໃຫຍ່ນໍານາຍ ພານ) .(42 :26
27. ທຸກຂະຕະໄດ້ຫາບນາກ ແລະ ກາກັບເມືອສາລາບ່ອນ ພັກ ແລ້ວຫາບກາ ແລະ ນາກໄປສົ່ງຈົນເຖິງບ້ານເຖິງເມືອງ .(44 :27)

28. ທຸກຄະຕະໄດ້ໄປສົ່ງພະຍາກາ ທີ່ແດນຫິມະພານ; ກາ ໄດ້ສັນຍາວ່າ ຈະດູແລ, ຊ່ວຍ ເຫຼືອກໍາພ້າ .(46 :28)
29. ທຸກຂະຕະໄປສົ່ງພະຍານາກ ເຖິງບ່ອນຢູ່ຂອງນາກ ທີ່ ແມ່ນໍ້າໃຫຍ່, ພະຍານາກສັນຍາວ່າຈະບໍ່ລືບຸນຄຸນ ຈະດູແລ, ຊ່ວຍເຫຼືອກໍາພ້າ .(47 :29)
30. ພະຍາກາໄດ້ນໍາແກ້ວວິເສດມາມອບໃຫ້ແກ່ກໍາພ້າ ແລະ ບອກວ່າຢາກໄດ້ເງິນຄໍາໃຫ້ໂຍນ ແກ້ວໜ່ວຍນີ້ຂຶ້ນຟ້າ ,ເງິນຄໍາກໍຈະລັ່ງໄຫຼລົງມາ ດັ່ງໃຈປາຖະໜາ) ! .(48 :30
31. ພະຍານາກເມື່ອກັບສູ່ເມືອງແລ້ວ ກໍລົ້ມປ່ວຍ ຈຶ່ງຂໍໃຫ້ ທຸກຂະຕະໄປຮັກສາ.(50 :31) !
32. ກໍາພ້າໄດ້ໄປປິ່ນປົວອາການປ່ວຍຂອງພະຍານາກໃນ ເມືອງບາດານ ຕາມຄໍາຂໍຮ້ອງ..(51 :32)
33. ກໍາພ້າໄດ້ ເອົາມີດຕັດມາຕັດມອງໄໝຟ້າທີ່ກ້ຽວພັນລໍາ ຕົວຂອງພະຍາຍາກ ເຮັດໃຫ້ພະຍານາກສວ່າງເຊົາ ຄວາມເຈັບປວດ .(53 :33)
34. ກໍາພ້າເຫັນສາວໃນເມືອງນາກມາຫາພາເຂົ້າ ແລະ ແຕ່ງ ຂັນໝາກ, ຂັນເງິນຂັນຄໍາມາຖວາຍ .(54 :34)!
35. ພະຍານາກຫາຍຈາກຄວາມເຈັບປວດ ຈຶ່ງຍົກເມືອງ ບາດານໃຫ້ແກ່ກໍາພ້າ ແຕ່ກໍາພ້າຮັບ ແຕ່ກໍຮັບຢູ່ນໍາພະຍາ ນາກໃຫ້ໄດ້ຂວບປີ .(55 :35)
36. ໄລຍະຢູ່ເມືອງນາກ, ກໍາພ້າໄປເບິ່ງທຸກທີ່ທຸກບ່ອນ , ຮຽນຮູ້ຮີດຄອງປະເພນີ ແລະ ຮຽນຮູ້ເຮັດຝົນຕົກ, ຟ້າຜ່າ ແລະ ລົມແຮງ .(56 :36)
37. ພໍເຖິງຂວບປີ, ກໍາພ້າກາບໄຫວ້ພະຍາເມືອງນາກ ເພື່ອ ຕ່າວເມືອບ້ານເມືອງ ເພາະຄິດເຖິງຍາ ແລະ ນ້ອງ .(37:61)
38. ກໍາພ້າໄດ້ສຸບເກືອບແກ້ວ ແລ້ວທະຍານຂຶ້ນເທິງເວຫາ ບິນຜ່ານເມືອງເສລາ ຈົນຄໍ່າຈຶ່ງເຖິງເມືອງມິດຖີລາ ແລ້ວແລ ເຫັນສາລາ ຢູ່ດອນກາງນໍ້າ ຈຶ່ງລົງພັກຢູ່ທີ່ນັ້ນ .(63 :38)
39. ນາງສຸວັນນະພິມພາ ລົງອາບນໍ້າສະຜົມໄດ້ເຮັດຕ້າງຫູ ວິເສດຕົກລົງແມ່ນໍ້າ ຫາແນວໃດກໍບໍ່ໄດ້ .(66 :39)
40. ເສນາອາມາດ ແລະ ຄົນທົ່ວເມືອງກໍບໍ່ມີໃຜສາມາດດໍາ ນໍ້າໄດ້ ເພາະມີສັດຮ້າຍ .(67 :40)
41. ກໍາພ້າລົງໄປຍ່າງໃນວັງນໍ້າຫຼວງ ໂດຍບໍ່ກົວຢ້ານ ແລ້ວ ເກັບເອົາຕ່າງຫູທັງຄູ່ໄດ້ .(69 :41) !
42. ພະຍາ ,ເສນາອາມາດ ພ້ອມ ຊາວເມືອງໄດ້ຍໍພາຂວັນ ມາຕັ້ງ, ເຊີນທ້າວກໍາພ້າ ແລະ ນາງຂຶ້ນນັ່ງແທ່ນ ແລ້ວ ປະກາດແຕ່ງຕັ້ງ ກໍາພ້າຂຶ້ນຄອງເມືອງ .(71 :42)
43. ກໍາພ້າ ແລະ ພະຍາເມືອງມິດຖີລາ ທັງເສນາອາມາດ ໄພ່ພົນຈໍານວນຫຼາຍໄດ້ແຫ່ຂະບວນຫຼວງ ເພື່ອໄປຍາມຍ່າ ແລະ ນ້ອງຢູ່ເມືອງຈໍາປານະຄອນ .(74 :43)

44. ຊາວເມືອງເທບທານີ ເຫັນຂະບວນຊ້າງມ້າ ແລະ ໄພ່ພົນຫຼັ່ງໄຫຼເຂົ້າມາ ຄິດວ່າແມ່ນເສິກເຂົ້າບ້ານ ຈຶ່ງກຽມການຕໍ່ສູ້ຄືນ .(76 :44)
45. ພະຍາເມືອງເທບທານີໄດ້ສັ່ງໃຫ້ຂຸນຫີນ ແລະ ຂຸນພົນໄປຖາມໃຫ້ຮູ້ກົກປາຍສາເຫດວ່າ ເຂົາຢາກໄດ້ອັນໃດ ຈຶ່ງເອົາໄພ່ພົນມາຮອດດິນແດນນີ້.(77 :45) !
46. ພະຍາເມືອງທານີດີໃຈຫຼາຍຈຶ່ງໄດ້ບອກໃຫ້ຂຸນທັງສອງຮີບກຽມເຂົ້າໃສ່ກວຍແບກຫາບ ໄປແຈກຢາຍໃຫ້ຂະບວນແຫ່ .(79 :46)
ລາຊາເຈົ້າຈຸນລະນີເມືອງໃຫຍ່ເທບທານີນໄດ້ເອົາແກ້ວ 47 ວິເສດມາຜັດສີໃນຍາມປີໃໝ່ ຖືກຮຸ້ງໃຫຍ່ຄາບເອົາໄປຕົກລົງວັງນໍ້າໃຫຍ່ ) .(81 :47
48. ພະຍາຢາກໄດ້ໜ່ວຍແກ້ວຄືນ ຈຶ່ງໄດ້ອອກ ຄໍາສັ່ງໃຫ້ເສນາປ່າວປະກາດວ່າ ຫາກໃຜສາມາດນໍາເອົາລູກແກ້ວຄືນມາໄດ້ ຈະມອບເມືອງ ແລະ ລູກສາວໃຫ້.(82 :48)
49. ລາຊາເມືອງເທບທານີ ໄດ້ອອກຄໍາສັ່ງໃຫ້ເສນາອາມາດໄປຂໍຄວາມຊ່ວຍເຫຼືອຈາກກໍາພ້າມາຊ່ວຍແກ້ໄຂຄວາມເດືອດຮ້ອນ .(83 :49)
50. ກໍາພ້າໄດ້ນໍາເອົາແກ້ວມະນີໂຊດຈາກມະຫາສະໝຸດມາມອບໃຫ້ແສນເມືອງໄປສົ່ງໃຫ້ພະຍາເມືອງ ເທບທານີຄືເກົ່າ .(85 :50)
51. ພະຍາເມືອງເທບທານີມີຄວາມປິຕິຍິນດີ ຢ່າງຍິ່ງ ຈຶ່ງຈັດຂະບວນແຫ່ມາເຊີນກໍາພ້າໄປຄອງລາດ ພ້ອມທັງມອບລູກສາວໃຫ້ .(86 :51)
52. ແສນເມືອງກໍໄດ້ນໍາເອົາເຄື່ອງຂອງຕ່າງໆຕາມທໍານຽມຂອງພະຍາເມືອງເທບທານີມາແຕ່ງກາຍໃຫ້ກໍາພ້າ ແລ້ວພາຂີ່ຊ້າງ ໂດຍມີເສນາຖຸ້ມຄອງຕະ ຫຼອດທາງ .(87 :52)
53. ເຈົ້າເມືອງເທບທານີໄດ້ຟັງກໍາພ້າເລົ່າເຫດການທັງໝົດແລ້ວ ກໍຍິນດີຊົມຊື່ນຈຶ່ງໄດ້ມອບບ້ານເມືອງ ແລະລູກສາວໃຫ້ແກ່ກໍາພ້າປົກຄອງ .(90 :53)
54. ພະຍາເຈົ້າເມືອງໄດ້ສັ່ງໃຫ້ກໍາພ້າ ແລະ ລູກສາວນາງມັດຖາລີ ເຂົ້າຫໍຮຽງຄູ່ກັນ ) .(91 :54
55. ກໍາພ້າໄດ້ສະເຫວີຍລາດ ບ້ານເມືອງມີຄວາມສຸກບໍ່ມີເລື່ອງຮ້ອນເຄືອງຢ່າງໃດ .(92 :55)
56. ກໍາພ້າໄດ້ປົກຄອງບ້ານເມືອງເທບທານີເປັນເວລາເກືອບປີ ຈຶ່ງນໍາພາຂະບວນເຄື່ອນທີ່ອອກໄປເມືອງຈໍາປານະຄອນ ) .(93 :56
57. ຂະບວນແຫ່ໄດ້ເດີນທາງເປັນເວລາສາມເດືອນຍັງບໍ່ຮອດ; ກໍາພ້າ ຈຶ່ງໃຊ້ເວດ ມົນທະຍານຂຶ້ນເວຫາໄປເຖິງເມືອງຈໍາປາຫາຍ່າກ່ອນ .(95 :57) !
58. ກໍາພ້າຟ້າວແລ່ນກອດຍ່າ, ຍ່າໄດ້ສະຕິກໍກອດເອົາທ້າວໃສ່ຕັກດ້ວຍຄວາມດີໃຈປານໄດ້ຄໍາໝື່ນຕື້ ( .(96 :58
59. ກໍາພ້າໄດ້ເລົ່າເລື່ອງການຫຼິ້ງປ່າຊອກຫາສ່ຽວເສດຖີສູ່ຍ່າ ແລະ ນ້ອງຟັງທຸກປະການ .(97 :59)
60. ກໍາພ້າໄດ້ເລົ່າເລື່ອງການເດີນທາງ ແລ້ວໄດ້ເຄື່ອງຂອງວິເສດ,ໄດ້ປົກຄອງເມືອງ ແລະໄດ້ເມຍທັງສອງໃຫ້ຍ່າ ແລະນ້ອງຟັງ .(98 :60) !
61. ກໍາພ້າໄດ້ທະຍານໄປຫານາງບົວທອງ,ໄດ້ເຫັນບ່າວສາວຍັງພາກັນກິນເຫຼົ້າງານສູ່ຂໍນາງ ນັນແຊວໆ .(100 :61)
62. ກໍາພ້າໄດ້ຫາວິທີ ເຂົ້າໄປຫາບົວທອງ ແລ້ວຄິດຄະນຶງຫາຊໍ, ຖ້າສີຊໍຂຶ້ນ ນາງຄົງຈະຮູ້ວ່າເຮົາມາ .(101 :62) !
63. ນາງບົວທອງຍ່າງອອກນອກ, ທ້າວກໍາພ້າຫຼຽວເຫັນນາງກໍຟ້າວບິນລົງມາຫາ.(102 :63) !
64. ທັງສອງໄດ້ພົບກັນ ແລະ ໄດ້ບອກຮັກບອກຄວາມຄິດຮອດຄິດເຖິງກັນສູ່ກັນຟັງ) ! .(103 :64
65. ກໍາພ້ານັ່ງລົງຮຽງຂ້າງ ,ນາງບົວທອງບາຍເອົາມືທ້າວມາຈັບຢ່າງແໜ້ນ ພ້ອມທັງໄຫ້.(104 :65) !
66. ນາງບົວທອງໄດ້ກ່າວດ້ວຍຄໍາເວົ້າອອນຫວານ ທັງນໍ້າຕາໄຫຼລິນ ຂໍໃຫ້ອ້າຍຈົ່ງອີ່ຕົນນ້ອງແດ່, ຢ່າປະຖິ້ມນ້ອງ, ຄັນຊິຈາກນ້ອງໄປອີກຂໍໃຫ້ຂ້ານ້ອງຕາຍສາກ່ອນ.(105 :66) !
67. ພໍ່ຂອງນາງບົວທອງໄດ້ແຈ້ງໃຫ້ຊາວນະຄອນຈໍາປາຮູ້ວ່າ ມື້ອື່ນ, ຂະບວນແຫ່ຂອງພະຍາກໍາພ້າຈະເຂົ້າສູ່ວັງຫຼວງເຊິ່ງໄດ້ມີໄພ່ພົນແຫ່ນໍາເປັນຕື້ .(106 :67)
68. ຂະບວນແຫ່ມີທັງຄົນ ແລະ ຊ້າງມ້າຫຼັ່ງໄຫຼເຂົ້າເມືອງນະຄອນຈໍາປາ, ທ້າວເສດຖີຢ້ານຟ້າວໜີເຂົ້າປ່າ :68) .(107
69. ພະລາຊາເມືອງຈໍາປາໄດ້ເຊີນພະຍາກໍາພ້າ ແລະ ນາງໄປສູ່ໂຮງຫຼວງແທ່ນບັນລັງແກ້ວມີເສນາອາມາດຫຼາຍຄົນ , .(108 :69)ຄອຍເຝົ້າຮັບໃຊ້
70. ພະຍາເມືອງຈໍາປານະຄອນໄດ້ຂໍໃຫ້ຝູງໄພ່ນ້ອຍ ແລະເສນາອາມາດທຸກຄົນຈົ່ງຮັບຮູ້ ແລະ ກຽມພິທີມອບເມືອງໃຫ້ແກ່ພະຍາກໍາພ້າສະເຫວີຍລາດ .(109 :70)
71. ພະລາຊາເມືອງຈໍາປານະຄອນໄດ້ຈັດງານສະຫຼອງຢ່າງຄຶກຄື້ນ ແລະ ກຽມເຄື່ອງຂອງທີເປັນມຸງຄຸນ ແກ່ບ້ານເມືອງເພື່ອອະພິເສກກໍາພ້າຂຶ້ນປົກຄອງເມືອງຈໍາປານະຄອນ :71) 110) .
72. ລາຊາພະຍານາກ ແລະ ພະຍາກາໄດ້ຮັບຂ່າວ ກໍາພ້າຈະຂຶ້ນເປັນລາຊາເມືອງຈໍາປາກໍໄດ້ກະກຽມໄພ່ພົນ ມາ , .(111 :72)ອ່ວຍພອນ
73. ເມື່ອເຖິງລຶກງາມຍາມດີ, ພະຍາລາຊາ, ເສນາອາມາດ ແລະ ລາສະດອນ ໄດ້ໂສດສົງໃຫ້ກໍາພ້າເປັນພະຍາປົກຄອງ

ເມືອງຈຳປານະຄອນ ໂດຍມີນາງບົວທອງເປັນມະເຫສີ .( 112 :73)
74. ພະຍານາກໄດ້ເນລະມິດຜາສາດແກ້ວສວຍງາມ ແລ້ວເຊີນກຳພ້າພະຍາ ແລະມະເຫສີບົວທອງເຂົ້າສູ່ໂຮງທຳຜາສາດແກ້ວ.(114 :74)!
75. ພະຍາກາໄດ້ມອບແກ້ວວິເສດໃຫ້ແກ່ກຳພ້າພະຍາເມືອງຈຳປານະຄອນ .(115 :75)!
76. ພະຍາລາຊາ ແລະ ມະເຫສີໄດ້ແຕ່ງຂັນສີມມາ ພະຍານາກ ແລະ ພະຍາກາໃຫ້ຫຼຸດພົ້ນຈາກບາບກຳເວນ :76) ! .(115
77. ພະລາຊາກຳພ້າຂຶ້ນສະເຫວີຍລາດແລ້ວ ແສນເມືອງທັງສອງ ໄດ້ຂາບທູນກັບຄືນບ້ານເກີດເມືອງນອນ ( :77 .(118
78. ພະລາຊາກຳພ້າຍາມໃດກໍຕັ້ງໃຈ ເຮັດບຸນກຸສົນໃຫ້ທານແກ່ໄພ່ພົນຜູ້ທຸກໄຮ້ໃຫ້ທົ່ວເຖິງກັນ .(120 :78)
79. ກຳພ້າພະລາຊາມີຄວາມເມດຕາໃຫ້ອະໄພແກ່ສ່ຽວເສດຖີກຳພ້າ .(121 :79)
80. ພະລາຊາກຽມເຄື່ອງຂອງແລ້ວສຸບເກີບແກ້ວຄູ່ວິເສດ, ກອດເອົາເມຍທະຍານຂຶ້ນເວຫາເໝືອນດັ່ງຫົງຄຳ ເພື່ອໄປຍາມບ້ານ.(123 :80)
81. ຍັກໂຂໂນຢາກໄດ້ເມຍຂອງພະລາຊາ ແຕ່ຖືກພະລາຊາເອົາດາບປະກາຍສິດ ຜ່າລົງໃສ່ຫົວ ຈຶ່ງໜີໄປ.(125 :81) !
82. ພະລາຊາໄດ້ພາເມຍທັງສອງເຫາະເຫີນເດີນອາກາດມາສິ່ງນາງມັດຖາລີ ທີ່ເມືອງນະຄອນເທບທານີ ແລ້ວພານາງເດີນທາງໄປເມືອງມິດຖິລາ .(126 :82)
83. ພະລາຊາພານາງພິມພາເຫາະເຫີນເດີນອາກາດ ແລະພັກຜ່ອນໃນປ່າທຳມະຊາດອັນສວຍງາມ ແລ້ວກໍເຫາະເຫີນເດີນທາງມາຮອດເມືອງມິດທິລາ .(127 :83)
84. ພະລາຊາໄດ້ຢູ່ປົວແປງເມືອງມິດຖິລາສາມເດືອນ ແລ້ວມາຢູ່ເມືອງເທບທານີນສາມເດືອນ ແລ້ວສັນຍາວ່າຈະສ້າງສາສາມເມືອງໃຫ້ຈະເລີນ .(128 :84)
85. ພະລາຊາຈັບດາບຄັນໄຊ ແລະ ສຸບເກີບວິເສດທະຍານຂຶ້ນເວຫາອາກາດ ກັບຄືນສູ່ເມືອງຈຳປານະຄອນ :85) .(130
86. ພະລາຊາກຳພ້າໄດ້ເປັນຄົນມີເມດຕາ ລ້ຽງດູຜູ້ມີພະຄຸນຄື ລ້ຽງຍ່າ ແລະ ທຳບຸນທຳທານໃຫ້ຝູງຄົນທຸກຍາກບໍ່ຂາດຈົນສິ້ນອາຍຸສັງຂານ ເມື່ອຕາຍໄປ ຈຶ່ງໄດ້ຂຶ້ນສູ່ສະຫວັນ ( .(130 :86
87. ເລື່ອງ ກຳພ້າກາບລາງ ຫຼື ທ້າວທຸກຂະຕະເປັນນິທານສອນທຸກຄົນໃຫ້ທຳແຕ່ຄວາມດີ ລະເວັ້ນຄວາມຊົ່ວແລ້ວໄດ້ເກີດເປັນນາງຟ້າ, ເທວະບຸດເທວະດາຢູ່ສວງສະຫວັນຊັ້ນດາວະດຶງ .(133 :87)

**4. ວິພາກຜົນ**

ການສຶກສາການນຳໃຊ້ຫຼັກ ການຂຽນຫຍໍ້ໜ້າ ໃນນິທານພື້ນເມືອງລາວ ເພື່ອຊອກຫາວິທີຈັດຮຽງເນື້ອເລື່ອງດ້ວຍການຂຽນຫຍໍ້ໜ້າ ແລະ ຖອດປະໂຫຍກໃຈຄວາມຂອງຫຍໍ້ໜ້າໃນນິທານກຳພ້າກາບລາງ ໂດຍອີງໃສ່ແນວຄິດທິດສະດີການຂຽນຫຍໍ້ໜ້າຂອງ Sangkhwanyuen (1982) ເປັນແນວທາງໃນການສຶກສາ. ການຄົ້ນຄວ້າພົບວ່າ ນິທານກຳພ້າກາບລາງເປັນກອນເລື່ອງຍາວມີ 134 ໜ້າ 868 ບາດກອນ ແລະ ມີ 3472 ວັກ. ການວິເຄາະເຫດການການເຄືອນໄຫວຂອງຕົວລະຄອນເລື່ອງມີ 87 ເຫດການ. ດັ່ງນັ້ນ ການຈັດຮຽງເນື້ອເລື່ອງນິທານກຳພ້າກາບລາງຕາມ ຫຼັກການຂຽນຫຍໍ້ໜ້າຈຶ່ງໄດ້ຫຍໍ້ໜ້າຈຳນວນ 87 ຫຍໍ້ໜ້າ ແລະ ໃນແຕ່ລະຫຍໍ້ມີປະໂຫຍກໃຈຄວາມສຳຄັນວາງໄວ້ໃນຫຍໍ້ໜ້າ. ນິທານມີເນື້ອໃນເວົ້າເຖິງຫຼັກທຳຄຳສອນສຳລັບການດຳລົງຊີວິດແຝງຢູ່ໃນອາລົມຄວາມຮັກທີ່ຊື່ສັດ ແລະ ນິ້ມນວນອ່ອນຫວານຕາມວັດທະນະທຳລາວ.

ການຈັດຮຽງນິທານກຳພ້າກາບລາງຈາກຄຳຮ້ອຍກອງເປັນຄຳຮ້ອຍແກ້ວ ສາມາດສະຫຼຸບເປັນວິທີການຮຽບຮຽງນິທານພື້ນເມືອງຕາມແນວຄິດທິດສະດີການຂຽນຫຍໍ້ໜ້າໄດ້ 7 ຂັ້ນຕອນຄື 1) ອ່ານເລື່ອງໃຫ້ເຂົ້າໃຈເນື້ອເລື່ອງ 2) ແບ່ງບົດເລື່ອງອອກເປັນຕອນ 3) ແບ່ງເຫດການເປັນຫຍໍ້ໜ້າ 4) ລວມບາດກອນຕາມເຫດການເປັນໜຶ່ງ ຫຍໍ້ໜ້າ 5) ຕັດຄຳບຸພະບົດ ແລະ ຄຳສ້ອຍບໍ່ເປັນຈຳເປັນ, ປ່ຽນສຳນວນກອນ 6) ຈັດຮຽງເນື້ອເລື່ອງເປັນຫຍໍ້ໜ້າ ຕາມຫຼັກການຂຽນຫຍໍ້ໜ້າ. 7) ນຳໃຊ້ເຄື່ອງໝາຍວັກຕອນຂອງພາສາລາວ ລົງໃນຫຍໍ້ໜ້າ.

ຜົນການຄົ້ນຄວ້າດັ່ງກ່າວແຕກຕ່າງກັບການຄົ້ນຄວ້າຜ່ານມາ ເພາະການຄົ້ນຄວ້າໄດ້ອີງໃສ່ແນວຄິດທິດສະດີການຂຽນຫຍໍ້ໜ້າ ຂອງ Sangkhwanyuen (1982) ເຊິ່ງແນວຄິດທິດສະດີທາງພາສາສາດ ມາໃຊ້ໃນການຄົ້ນຄວ້າ ແລະຈັດຮຽງນິທານທີເປັນຄຳຮ້ອຍກອງເປັນຄຳຮ້ອຍແກ້ວໄດ້. ນອກຈາກນີ້ການນຳໃຊ້ແນວຄິດທິດສະດີເຄື່ອງໝາຍວັກຕອນໃນການຂຽນ ແລະ ພິມພາສາລາວຂອງ Nounnavong et al. (2020) ມາໃຊ້ ເພື່ອຊ່ອຍເຮັດໃຫ້ປະໂຫຍກຕ່າງໆໃນຫຍໍ້ໜ້າມີຄວາມຈະແຈ້ງອ່ານງ່າຍ ແລະສະດວກໃນການຈັບໃຈຄວາມສຳຄັນຂອງຫຍໍ້ໜ້າ. ການສຶກສາບົດຄົ້ນຄວ້າທີກ່ຽວຂ້ອງບໍ່ພົບບົດໃດທີສຶກສາ ແລະຈັດຮຽງນິທານຕາມຫຼັກການຂຽນຫຍໍ້ໜ້າ ດັ່ງຜົນໄດ້ຂອງການຄົ້ນຄວ້ຈຶ່ງເປັນວິທີໃໝ່ໃນການຈັດຮຽງນິທານດວ້ຍ

ສິລະປະການຂຽນຫຍໍ້ໜ້າ ເພື່ອເຮັດໃຫ້ບົດນິທານອ່ານງ່າຍເຂົ້າໃຈເນື້ອໃນບົດໄດ້ໄວ ແລະ ສະຫຼຸບເນື້ອໃນບົດນິທານພື້ນເມືອງໄດ້ສະດວກ.

## 5. ສະຫຼຸບ

ການສຶກສາວິທີການນຳໃຊ້ຫຼັກການຂຽນຫຍໍ້ໜ້າໃນການຈັດຮຽງເນື້ອເລື່ອງນິທານກຳພ້າກາບລາງຈາກຄຳຮ້ອຍກອງເປັນຄຳຮ້ອຍແກ້ວ ສາມາດສະຫຼຸບວິທີຈັດຮຽງນິທານໄດ້ 7 ຂັ້ນຕອນ ຄື 1) ອ່ານກອນເລື່ອງໃຫ້ເຂົ້າໃຈເນື້ອ ກອນເລື່ອງທັງໝົດ. 2) ແບ່ງກອນເລື່ອງອອກເປັນຕອນ. 3) ແບ່ງຕອນກອນຕາມເຫດການການເຄື່ອນໄຫວຂອງຕົວລະຄອນ. 4) ລວມບາດກອນຕາມເຫດການ ໜຶ່ງເຫດການເປັນໜຶ່ງຫຍໍ້ໜ້າ. 5) ຕັດຄຳບຸບພະບຸດ ແລະ ຄຳສ້ອຍທີ່ບໍ່ຈຳເປັນອອກ ແລ້ວປັບປ່ຽນສຳນວນກອນເປັນຄຳເວົ້າທຳມະດາ; ຖ້າຈະຮັກສາສຳນວນກອນໄວ້ ຕ້ອງຂຽນໄວ້ໃນວົງຢືມ. 6) ຂຽນຫຍໍ້ໜ້າດ້ວຍປະໂຫຍກໃຈຄວາມສຳຄັນ ແລະ ປະໂຫຍກຂະຫຍາຍໃຈຄວາມສຳຄັນຂອງຫຍໍ້ໜ້າໃຫ້ຈະແຈ້ງ. 7)ໃຊ້ເຄື່ອງໝາຍວັກຕອນພາສາລາວລົງໃນຫຍໍ້ໜ້າ; ເຮັດໃຫ້ປະໂຫຍກ ແລະ ຫຍໍ້ໜ້າມີຄວາມສົມບູນ, ອ່ານງ່າຍເຂົ້າໃຈໄວ ສະດວກໃນການສະຫຼຸບເລື່ອງຫຍໍ້.

ການສຶກສາຍັງສາມາດຈັດຮຽງເນື້ອເລື່ອງນິທານກຳພ້າກາບລາງຕາມຫຼັກການການຂຽນຫຍໍ້ໜ້າໄດ້ 87 ຫຍໍ້ໜ້າ ໃນແຕ່ລະຫຍໍ້ໜ້າມີປະໂຫຍກໃຈຄວາມສຳຄັນປະໂຫຍກໜຶ່ງ. ສະນັ້ນການສຶກສາຈຶ່ງສາມາດຖອດປະໂຫຍກໃຈຄວາມໄດ້ 87 ປະໂຫຍກໃຈຄວາມສຳຄັນ. ການອ່ານປະໂຫຍກໃຈຄວາມຂອງນິທານກຳພ້າກາບລາງເຫັນວ່ານິທານເລື່ອງນີ້ເນື້ອໃນເວົ້າເຖິງຫຼັກທຳຄຳສອນສຳລັບການດຳລົງຊີວິດ ແຝງຢູ່ໃນອາລົມຄວາມຮັກທີ່ຊື່ສັດ ແລະ ນິ້ມນວນອ່ອນຫວານຕາມວັດທະນະທຳລາວ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bounyavong, D., Khaminxu, O., & Vilaysak. S. (2003). *The story of "Thao Hung Thao Cheung*, Department of Lao Language and Literature, National University of Laos.

Chanthachak. (S) and Ansomphoum, B. (2015). *Kampa Kablaang*. Wat That Luang Nuea, Saysettha District, Vientiane Capital.

Charles, J. (1985). *Myth, legends & Tales from the Hmong of Laos*, Minnesota: Linguistics Department, Macalester collegs.

Duangphasy. M, Southixay. S, Phokhasili. K (2024). Oral Literature of the Red Tay People, Phuong District, Vientiane Province and Vientiane Capital. *Journal of Social Sciences (JSS), 25*(1), 65-51.

Kobbun, P. (2001). *Structure of the Tai-Lao Orphan Folktales*, Grammar of Folktales: A Study of Folktale Structure.

Lindell, S. (1977). *Folk tales from Kammu III: A story-teller's tales*, Lund: Cuzon

Malaikham, B. Phokhong (2025). Literature and Folklore of the Xiengkhouang People: Muang Khoun, *Journal of Social Sciences (JSS), 25*(1), 62-69.

NaThalang, S. (2014). *Grammar of Folktales: A Study of Folktale Structure*, Faculty of Arts, Chulalongkorn University.

Nuannavong, A. Holanouphab. S, Khammung. P, Sayyavong. S Sayyasit. L. (2020). *Basic Principles of Using the Lao Language*. Volume 1

Phetcharat, K. (2000). *Analysis of the Pat River Basin Folktales, Uttaradit Province*, Silpakorn University.

Phonkaseurmsouk, S . (1989). *Folklore Volume 2*, National Institute of Arts and Culture

Phollurxa, Kh. Manivong. S, Seebounheuang. O. (2009). *Lao Kampa Folklore*. Faculty of Letters, Department of

ChangkwanYuen, P. (1982). *The Art of Writing*, Bangkok.

Sangkhaphanthanon, L. (2011). *The role of Lao folk tales*. [Unpublished doctoral thesis]. Department of Thai Language, Naresuan University.

Sangkhwanyuen, P. (1982). *The Art of Writing*. Bangkok.

Soudavhanh, Kh. (2005). *Katu Laos Tales*. Culture Institution. Ministry of Culture

Thepsymouang, B. (2017). *History of Literature*. Vientiane Dao Vilay Publishing House

Vilavong, S. (1961). *Phavetsantrasadok book*. Buddhism for Development Project

vongthes, S. (2005). *Thai Folktales*, Bangkok: Matichon.